# Course: Small Business Management

## Chapter 1:
Overview of Small Business

Lecturer: Stamy OUNPHOUVONG

Souphanouvong University, Lao PDR

# ວິຊາ ການບໍລິຫານທຸລະກິດຂະໜາດນ້ອຍ
# Small Business Management

## ບົດທີ 1
## ສະພາບລວມຂອງທຸລະກິດຂະໜາດນອ້ຍ
## Overview of Small Business

ສອນໂດຍ: ຊອ. ປທ. ສະຕາມີ ອຸ່ນພູວົງ

ມະຫາວິທະຍາໄລ ສຸພານຸວົງ

# ທຸລະກິດໝາຍເຖິງຫຍັງ?

What is Business?

- ຄຳວ່າ '**ທຸລະກິດ**' ຫມາຍເຖິງ**ອົງການຈັດຕັ້ງ** ຫຼື **ໜ່ວຍງານທີ່ດຳເນີນທຸລະກິດ**, ອຸດສາຫະກຳ, ຫຼື ກິດຈະກຳດ້ານວິຊາຊີບ. ໂດຍມີຈຸດປະສົງເພື່ອສ້າງ**ລາຍໄດ້** **ຫຼື** **ກຳໄລ** (Merriam-Webster).
- ໂດຍທົ່ວໄປແລ້ວທຸລະກິດຈະມີສ່ວນຮ່ວມໃນ**ການຜະລິດ** ຫຼື **ການແລກປ່ຽນສິນຄ້າ** ແລະ **ການບໍລິການ** ແລະ **ດຳເນີນງານ** ພາຍໃນສະພາບແວດລ້ອມຕະຫຼາດທີ່ມີການແຂ່ງຂັນ. ຂອບເຂດການດຳເນີນທຸລະກິດສາມາດແຕກຕ່າງກັນຢ່າງກວ້າງຂວາງ, ກວມເອົາວິສາຫະກິດຂະໜາດນ້ອຍເຖິງວິສາຫະກິດຂະໜາດໃຫຍ່.

# ການບໍລິຫານໝາຍເຖິງຫຍັງ ?

## What is Management?

- ການບໍລິຫານໝາຍເຖິງ**ຂະບວນການວາງແຜນ, ການຈັດຕັ້ງ, ຊີ້ນໍາ** ແລະ **ການຄວບຄຸມຊັບພະຍາກອນ** (ເຊັ່ນ: ມະນຸດ, ການເງິນ, ແລະ ວັດຖຸ) ເພື່ອບັນລຸເປົ້າໝາຍການຈັດຕັ້ງຢ່າງມີປະສິດທິພາບ ແລະ ປະສິດທິຜົນ. ໂດຍກ່ຽວຂ້ອງກັບການປະສານງານຄວາມພະຍາຍາມຂອງຜູ້ຄົນເພື່ອບັນລຸຈຸດປະສົງ ແລະ **ການນໍາໃຊ້ຊັບພະຍາກອນທີ່ມີຢູ່ຢ່າງຈໍາກັດໃຫ້ເກີດປະໂຫຍດສູງສຸດ** (Robbins et al., 2017).

# 1.1 ຄວາມຫມາຍຂອງທຸລະກິດຂະໜາດນ້ອຍ ໃນ ສ ປປ ລາວ

ໂດຍອີງຕາມດຳລັດວ່າດ້ວຍການຈັດແບ່ງຂະໜາດ ວິສາຫະກິດຂະໜາດ ແລະ ກາງ ເລກທີ 25/ລບ ລົງວັນທີ 16 ມັງກອນ 2017 ການຈັດແບ່ງຂະໜາດວິສາຫະກິດຂະໜາດ ນ້ອຍ ແລະ ກາງແມ່ນອີງໃສ່ຈຳນວນແຮງງານສະເລ່ຍໃນປີ ຫຼື ມູນຄ່າຊັບສິນທັງໝົດ ຫຼື ລວມຍອດລາຍຮັບທຸລະກິດປະຈຳປີ ຂອງວິສາຫະກິດທີ່ໄດ້ຂຶ້ນທະບຽນ ແລະ ເຄື່ອນໄຫວຖືກຕ້ອງ ຕາມກົດໝາຍ ໂດຍອີງຕາມຂະແໜງວິສາຫະກິດທີ່ດຳເນີນ ການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ.

*[Decree on determining the size of micro-enterprises, small and medium-sized enterprises, No. 04, January 12, 2023]*

Figure 1

# 1.2 ປະເພດຂອງທຸລະກິດຂະໜາດນ້ອຍໃນ ສປປ ລາວ



- ຂະໜາດວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການຈັດແບ່ງເປັນ 3 ຂະໜາດດັ່ງນີ້:

– ຈຸນລະວິສາຫະກິດ

– ວິສາຫະກິດຂະໜາດນ້ອຍ

– ວິສາຫະກິດຂະໜາດກາງ

*[Decree on determining the size of micro-enterprises, small and medium-sized enterprises, No. 04, January 12, 2023]*

Figure 1

# 1.2 ປະເພດຂອງທຸລະກິດຂະໜາດນ້ອຍໃນ ສປປ ລາວ

1. ຈຸນລະວິສາຫະກິດ ແມ່ນວິສາຫະກິດຂະໜາດນ້ອຍສຸດ ທີ່ມີເງື່ອນໄຂໃດໜຶ່ງດັ່ງນີ້:

– ຂະແໜງການຜະລິດສິນຄ້າ: ແຮງງານສະເລ່ຍໃນປີ : 1-5 ຄົນ, ມູນຄ່າຊັບສິນທັງໝົດ: ບໍ່ເກີນ 100,000,000 ກີບ, ຍອດລາຍຮັບທຸລະກິດປະຈຳປີ: ບໍ່ເກີນ 400,000,000 ກີບ

– ຂະແໜງການຄ້າ: ແຮງງານສະເລ່ຍໃນປີ : 1-5 ຄົນ, ມູນຄ່າຊັບສິນທັງໝົດ: ບໍ່ເກີນ 150,000,000 ກີບ, ຍອດລາຍຮັບທຸລະກິດປະຈຳປີ: ບໍ່ເກີນ 400,000,000 ກີບ

– ຂະແໜງການບໍລິການ: ແຮງງານສະເລ່ຍໃນປີ : 1-5 ຄົນ, ມູນຄ່າຊັບສິນທັງໝົດ: ບໍ່ເກີນ 200,000,000 ກີບ, ຍອດລາຍຮັບທຸລະກິດປະຈຳປີ: ບໍ່ເກີນ 400,000,000 ກີບ

*[Decree on determining the size of micro-enterprises, small and medium-sized enterprises, No. 04, January 12, 2023]*



# 1.2 ປະເພດຂອງທຸລະກິດຂະໜາດນ້ອຍໃນ ສປປ ລາວ

2. ວິສາຫະກິດຂະໜາດນ້ອຍ ແມ່ນວິສາຫະກິດທີ່ມີເງື່ອນໄຂໃດໜຶ່ງດັ່ງນີ້:

– ຂະແໜງການຜະລິດສິນຄ້າ: ແຮງງານສະເລ່ຍໃນປີ : 6-50 ຄົນ, ມູນຄ່າຊັບສິນທັງໝົດ: ບໍ່ເກີນ 1,000,000,000 ກີບ, ຍອດລາຍຮັບທຸລະກິດປະຈຳປີ: ບໍ່ເກີນ 2,000,000,000 ກີບ

– ຂະແໜງການຄ້າ: ແຮງງານສະເລ່ຍໃນປີ : 6-50 ຄົນ, ມູນຄ່າຊັບສິນທັງໝົດ: ບໍ່ເກີນ 1,000,000,000 ກີບ, ຍອດລາຍຮັບທຸລະກິດປະຈຳປີ: ບໍ່ເກີນ 3,000,000,000 ກີບ

– ຂະແໜງການບໍລິການ: ແຮງງານສະເລ່ຍໃນປີ : 6-50 ຄົນ, ມູນຄ່າຊັບສິນທັງໝົດ: ບໍ່ເກີນ 1,500,000,000 ກີບ, ຍອດລາຍຮັບທຸລະກິດປະຈຳປີ: ບໍ່ເກີນ 1,500,000,000 ກີບ

*[Decree on determining the size of micro-enterprises, small and medium-sized enterprises, No. 04, January 12, 2023]*



Figure 2

Figure 2

# 1.2 ປະເພດຂອງທຸລະກິດຂະໜາດນ້ອຍໃນ ສປປ ລາວ

3. ວິສາຫະກິດຂະໜາດກາງ ແມ່ນວິສາຫະກິດທີ່ມີເງື່ອນໄຂ ດັ່ງນີ້:

– ຂະແໜງການຜະລິດສິນຄ້າ: ແຮງງານສະເລ່ຍໃນປີ : 51-99 ຄົນ, ມູນຄ່າຊັບສິນທັງໝົດ: ບໍ່ເກີນ 4,000,000,000 ກີບ, ຍອດລາຍຮັບທຸລະກິດປະຈຳປີ: ບໍ່ເກີນ 4,000,000,000 ກີບ

– ຂະແໜງການຄ້າ: ແຮງງານສະເລ່ຍໃນປີ : 51-99 ຄົນ, ມູນຄ່າຊັບສິນທັງໝົດ: ບໍ່ເກີນ 4,000,000,000 ກີບ, ຍອດລາຍຮັບທຸລະກິດປະຈຳປີ: ບໍ່ເກີນ 6,000,000,000 ກີບ

– ຂະແໜງການບໍລິການ: ແຮງງານສະເລ່ຍໃນປີ : 51-99 ຄົນ, ມູນຄ່າຊັບສິນທັງໝົດ: ບໍ່ເກີນ 6,000,000,000 ກີບ, ຍອດລາຍຮັບທຸລະກິດປະຈຳປີ: ບໍ່ເກີນ 4,000,000,000 ກີບ

*[Decree on determining the size of micro-enterprises, small and medium-sized enterprises, No. 04, January 12, 2023]*



# ສະຫລຸບ

ທຸລະກິດຂະໜາດນ້ອຍເປັນທຸລະກິດທີ່ມີເຈົ້າຂອງກິດຈະການຄົນດຽວ ມີຄວາມເປັນອິດສະຫລະໃນການບໍລິຫານຄຸ້ມຄອງ, ໃຊ້ເງິນທືນຫນ້ອຍ, ເປັນກິດຈະການທີ່ມີຄູ່ແຂ່ງຂັນຫລາຍ ເພາະວ່າເປັນທຸລະກິດແບບຄອບຄົວທີ່ຫລາຍຄົນສາມາດເຮັດໄດ້.

ແຕ່ມັກມີຂໍ້ຜິດພາດງ່າຍ ເນື່ອງຈາກວ່າມີຜູ້ບໍລິຫານຕັດສິນໃຈຄົນດຽວ. ສະນັ້ນ, ຜູ້ປະກອບການຈະຕ້ອງມີການພິຈາລະນາວາງແຜນເປັນຢ່າງດີ.

ເຖິງເປັນພຽງທຸລະກິດຂະໜາດນ້ອຍແຕ່ກໍ່ສາມາດສ້າງລາຍໄດ້ເຮັດໃຫ້ມີຜົນກຳໄລບໍ່ຕ່າງຈາກທຸລະກິດຂະໜາດກາງ ແລະ ຂະໜາດໃຫຍ່ໄດ້ເຊັ່ນກັນ, ພ້ອມທັງເປັນພື້ນຖານຄວາມຫມັ້ນຄົງທາງເສດຖະກິດຂອງຊາດອີກດ້ວຍ.

Figure 3: Lao National Chamber of Commerce and Industry, https://lncci.la/

ສູນບໍລິການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງ
SME SERVICE CENTER (SSC)

Figure 4: SME service center, https://lncci.la/sme-service-center/

**ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (ສຄອຊ )**

***Lao National Chamber of Commerce and Industry***

ສ້າງຕັ້ງຂຶ້ນໃນປີ 1989 ເຊິ່ງເປັນ**ຕົວແທນໃຫ້ແກ່ປະຊາຄົມວິສາຫະກິດໃນ ສປປ ລາວ**. ເປັນການເຊື່ອມໂຍງລະຫວ່າງ ລັດ ແລະ ເອກະຊົນ ແລະ ເປັນຕົວແທນ ໃຫ້ແກ່ຜູ້ອອກແຮງງານ, ກຸ່ມບໍລິສັດ ແລະ ການຮ່ວມມືທົ່ວທຸກອົງການທີ່ໄດ້ຮັບການ ສ້າງຕັ້ງຂຶ້ນຕາມກົດໝາຍຂອງ ສປປ ລາວ. ປະຈຸບັນມີສະມາຊິກກວ່າ **4,000** ສະມາຊິກ, ທີ່ຕາງໜ້າຜ່ານສະພາການຄ້າ ໃນ 18 ແຂວງ ແລະ ສະມາຄົມ ນັກທຸລະກິດ ແລະ ກຸ່ມບໍລິສັດ. ນັ້ນເຮັດໃຫ້ LNCCI ເປັນສະມາຄົມທຸລະກິດທີ່ ໃຫຍ່ທີ່ສຸດ ແລະ ມີຕົວແທນຫຼາຍທີ່ສຸດ ໃນ ສປປ ລາວ

Figure 5: Lao National Chamber of Commerce and Industry, https://lncci.la/

# SME service center




Figure 6: SME service center, https://lncci.la/sme-service-center/

# 1.3 ປະໂຫຍດຂອງທຸລະກິດຂະໜາດນ້ອຍ

ການສ້າງວຽກງານ

ການຄິດຄົ້ນຜະລິດຕະພັນໃຫມ່

# 1.3 ປະໂຫຍດຂອງທຸລະກິດຂະໜາດນ້ອຍ

- ກະຕຸ້ນໃຫ້ມີການແຂ່ງຂັນ
- ການສະຫນັບສະຫນູນຕໍ່ທຸລະກິດຂະໜາດໃຫຍ່

## 1.3 ປະໂຫຍດຂອງທຸລະກິດຂະໜາດນ້ອຍ

ການຈັດຈຳໜ່າຍ

ການຈັດຊື້

## 1.3 ປະໂຫຍດຂອງທຸລະກິດຂະໜາດນ້ອຍ

ການບໍລິການ

ການຜະລິດສິນຄ້າ ແລະ ບໍລິການຢ່າງມີປະສິດທິພາບ

# 1.4 ບົດບາດຂອງທຸລະກິດຂະໜາດນ້ອຍຕໍ່ເສດຖະກິດ

1) ໂອກາດໃນການຈ້າງງານ
2) ຄວາມຫຼາກຫຼາຍທາງເສດຖະກິດ
3) ການພັດທະນາຊຸມຊົນ
4) ລາຍຮັບຈາກພາສີ ອາກອນ
5) ຄວາມຫຼາກຫຼາຍຂອງລະບົບຕ່ອງໂສ້ການສະໜອງ
6) ນະວັດຕະກໍາ ແລະ ຄວາມຄິດສ້າງສັນ
7) ການປັບຕົວ ແລະ ຄວາມຍືດຫຍຸ່ນຂອງເສດຖະກິດ

# 1.5 ຂໍ້ ໄດ້ປຽບ ແລະ ເສຍປຽບ ຂອງການປະກອບທຸລະກິດຂະໜາດນ້ອຍ




Figure 7: canva education, https://www.canva.com/design/DAF_lwDv_gQ/1yHZQqkxCsF3BMijcsc1Rw/edit

- **ຂໍ້ໄດ້ປຽບ**ຂອງການປະກອບທຸລະກິດຂະໜາດນ້ອຍ: **ມີຄວາມຍືດຢຸ່ນ ຄ່ອງຕົວ, ຄວາມເປັນໜຶ່ງດຽວໃນການຕັດສິນໃຈ, ຈັດຕັ້ງງ່າຍ ແລະ ມີຄວາມເປັນອິດສະຫລະ** ເປັນຕົ້ນ.....

ມີຄວາມຍືດຢຸ່ນ ຄ່ອງຕົວ,

ຄວາມເປັນໜຶ່ງດຽວໃນການຕັດສິນໃຈ,

ຈັດຕັ້ງງ່າຍ,

ແລະ ມີຄວາມເປັນອິດສະຫລະ ເປັນຕົ້ນ.....

- **ຂໍ້ເສຍປຽບ**ຂອງການປະກອບທຸລະກິດຂະໜາດນ້ອຍ: **ຂາດແຄນເງິນທຶນ, ຜູ້ບໍລິຫານຂາດປະສົບການ, ການຮັກສາພະນັກງານຍາກ ແລະ ມີການແຂ່ງຂັນກັບທຸລະກິດຂະໜາດໃຫຍ່** ເປັນຕົ້ນ

ຂາດແຄນເງິນທຶນ,

ຜູ້ບໍລິຫານຂາດປະສົບການ,

ການຮັກສາພະນັກງານຍາກ,

ມີການແຂ່ງຂັນກັບທຸລະກິດຂະໜາດໃຫຍ່ ເປັນຕົ້ນ

# 1.6 ຄວາມສຳເລັດ ແລະ ຄວາມລົ້ມເຫລວຂອງທຸລະກິດຂະໜາດນ້ອຍ



Figure 8: canva education, https://www.canva.com/design/DAF_lwDv_gQ/1yHZQqkxCsF3BMijcsc1Rw/edit

# ຄວາມສຳເລັດຂອງທຸລະກິດຂະໜາດນ້ອຍ

1) ມີຄວາມຍືດຫຍຸ່ນ,
2) ການພັດທະນາຜະລິດຕະພັນໃຫມ່,
3) ໃກ້ຊິດກັບລູກຄ້າ,
4) ຄຸນະພາບຂອງສິນຄ້າ
5) ການເລີ່ມທຸລະກິດຍັງຕ້ອງພິຈາລະນາເຖິງ ເງິນທືນ,
6) ພະນັກງານ,
7) ຂໍ້ມູນທີ່ຖືກຕ້ອງ
8) **ການຕະຫລາດ**

# ຄວາມລົ້ມເຫລວຂອງທຸລະກິດຂະໜາດນ້ອຍ

1) ບໍ່ມີສັກກະຍະພາບ ແລະ ຂີດຄວາມສາມາດພຽງພໍ,
2) ປະສົບການທີ່ມີບໍ່ສອດຄ່ອງກັນ,
3) ຂາດປະສົບການໃນການບໍລິຫານ,
4) ຂາດປະສົບການທາງດ້ານທຸລະກິດ.

**ຄວາມສູນເສຍຈາກຄວາມລົ້ມເຫລວຂອງທຸລະກິດຂະໜາດນ້ອຍ ກະທົບກັບເຈົ້າຂອງທຸລະກິດ ແລະ ປະເທດຊາດເຊັ່ນ:**

1) ສູນເສຍດ້ານເງິນທຶນ,
2) ດ້ານຈິດໃຈ,
3) ຂາດຄວາມເຊື່ອຫມັ້ນ
4) ລວມໄປເຖິງສົ່ງຜົນຕໍ່ລະບົບເສດຖະກິດຂອງປະເທດອີກດ້ວຍ...

# ວຽກບ້ານ
# Home work

1) ຈົ່ງອະທິບາຍຄວາມຫມາຍຂອງ**ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ** ວ່າມີຄວາມສຳຄັນແນວໃດ?
2) ພ້ອມທັງຍົກຕົວຢ່າງ **ຈຸນລະວິສາຫະກິດ** ແລະ **ທຸລະກິດຂະໜາດນ້ອຍ** ທີ່ມີຢູ່ໃນຊຸມຊົນ ຫລື ໃນເມືອງ ແຂວງ ທີ່ເຮົາຢູ່.

# Reference


- Merriam-Webster. (n.d.). Business. In Merriam-Webster.com dictionary. Retrieved [15/1/2024], from https://www.merriam-webster.com/dictionary/business
- Sirivanh Thongvanh. (2007). Small Business Management. The Faculty of Economics and Business Management, National University, published in 2007.
- Decree on determining the size of micro-enterprises, small and medium-sized enterprises, No. 04, January 12, 2023
- Robbins, S. P., Coulter, M., & DeCenzo, D. A. (2017). Fundamentals of management. Pearson.
- Figure 1: https://pixabay.com/vectors/gears-work-team-together-5193383/
- Figure 2: https://jclao.com/business-support-crucial-laos-join-aec-lock-growth/